ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ .3129.../ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ ...3/10/2025...

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາຜູ້ສະໜອງ ໃຫ້ເຊົ່າປ້າຍໂຄສະນາ (Billboard).

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ເຊົ່າປ້າຍໂຄສະນາ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາຜູ້ສະໜອງ ຊາບວ່າ ທຄຕລ ມີຄວາມຕ້ອງການ ຂຶ້ນປ້າຍໂຄສະນາ (Billboard) ຈຳນວນ 01 ປ້າຍ/ຈຸດ, ສະນັ້ນ ຈຶ່ງແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມ, ລາຍລະອຽດລຸ່ມນີ້:

- ສະຖານທີ່ຕັ້ງປ້າຍ: ສີ່ແຍກໄຟແດງກອງລະຄອນລຳ.
- ວັດສະດຸ: ໂຄງເຫຼັກ, ຜ້າໄວນິວ (ປ່ຽນໃໝ່ 3 ຄັ້ງ/ປີ), ມີດອກໄຟຊ່ອງຜ້າໄວນິວ, ລວມຮັບຜິດຊອບຄ່າອະນຸຍາດຈາກພາກລັດທຸກຢ່າງ.
- ໄລຍະເຊົ່າ: 12 ເດືອນ.

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

- **<u>ເອກະສານຊອງທີ 1</u>**:

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດດ້ານສິ່ງພິມ-ໂຄສະນາ: ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປະຈຳປີ 2022, 2023, 2024.
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນີ້, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ (ຕາມແບບຟອມຄັດຕິດແຈ້ງເຊີນ).
3. ເອກະສານເງື່ອນໄຂ ຂໍ້ 1 ແລະ 2 ແມ່ນ ສົ່ງຟາຍ pdf ເຂົ້າມາທີ່ Email: procurement@bcel.com.la, ແມ່ນໃຫ້ສົ່ງກ່ອນ ວັນຈັນ, ທີ 06/10/2025 ເວລາ 12:00 ໂມງ.

- **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C, ຍື່ນຊອງລາຄາໃນ ວັນສຸກ, ທີ **10/10/2025 ເວລາ 14:00** ໂມງ.
2. ໃບສະເໜີລາຄາໃຫ້ລະບຸ ມູນຄ່າລວມອາກອນທັງໝົດ ເປັນສະກຸນເງິນກີບ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງມີຄວາມສາມາດໃນການດຳເນີນວຽກ ໃຫ້ສຳເລັດພາຍໃນ 10 ວັນ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງວຽກ.

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ການຊໍາລະແມ່ນຈ່າຍເປັນ 02 ງວດ:

- ງວດທີ 1: ຈ່າຍ 90% ຂອງມູນຄ່າທັງໝົດ ພາຍຫຼັງຕິດຕັ້ງ-ຂຶ້ນປ້າຍໂຄສະນາ ຖືກຕ້ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.
- ງວດທີ 2: ຈ່າຍ 10% ຂອງມູນຄ່າທັງໝົດ ຫຼັງຄົບກໍານົດສັນຍາ 12 ເດືອນ, ຊໍາລະພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອໍານວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ຕິດຕໍ່ສອບຖາມຂໍ້ມູນເພີ່ມຕື່ມ:

021 213200 ຕໍ່ 414

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ປະເພດ / ວັດສະດຸ / ຂະໜາດ ແລະ ເງື່ອນໄຂອື່ນໆ | ການຮັບປະກັນສິນຄ້າ | ກຳນົດຕິດຕັ້ງສຳເລັດ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | | .... ປີ | ....ວັນ | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ...........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: